rfa | ວິທຍຸເອເຊັຽເສຣີ

# ໂຄງການສີທັນດອນ ເຊັນ ສັນຍາແລ້ວ

ໄມຊູລີ
2018.07.02



*ນ້ຳຂອງໃນເຂດເມືອງໂຂງ ແຂວງຈຳປາສັກ*

ໃນວັນທີ 30 ມິຖຸນາ 2018 ຜ່ານມາໄດ້ມີພິທີເຊັນສັນຍາ ໂຄງການພັທນາ ເຂດເສຖກິດພິເສດໃໝ່ ສີທັນດອນ ເມືອງໂຂງ ແຂວງຈຳປາສັກ ຣະຫວ່າງ ຣັຖບານລາວ ກັບບໍຣິສັດລາວ ມະຫານະທີ ສີທັນດອນ Investment ຈຳກັດ ຈາກ Hong Kong ແລະ ບໍຣິສັດ LTV ກໍ່ສ້າງ ຂົວ-ທາງ ເຄຫະສະຖານ ແລະຊົລປະທານ ຈຳກັດ.

ໂຄງການກໍ່ສ້າງ ເຂດເສຖິດພິເສດ ສີທັນດອນ ເທື່ອນີ້ ຈະໃຊ້ງົບປະມານ ໃນການລົງທຶນກວ່າ 9 ຕື້ ດອນລາ ສະຫະຣັຖ ຊຶ່ງຣັຖບານລາວ ລົງທຶນ 20% ສ່ວນຮ້ອຍ ແລະບໍຣິສັດຈີນ 80 ສ່ວນຮ້ອຍ. ຄາດວ່າຈະເຣີ້ມ ກໍ່ສ້າງໃນທ້າຍປີ 2018 ນີ້, ດັ່ງເຈົ້າໜ້າທີ່ ກ່ຽວຂ້ອງຂອງລາວ ທ່ານນຶ່ງ ກ່າວວ່າ:

*“ສ້າງຮ່ວມກັນ ເຊັນສັນຍາຮ່ວມກັນເຫມິດ ທັງ 2 ບໍຣິສັດ ເນມອັນດຽວກັນ ຈີນກັບລາວ ນະຮ່ວມກັນ ເຮັດຊື່ ມັນຊື່ ລາວ ມະນະທີ ຮົງກົງ investment ຂີດຕົວນີ້ ເປັນຫຍັງຈັ່ງເນມຈາກຕ່າງວ່າຊື່ ແຕ່ວ່າຕ່າງຄືງກັບເນມເສຖກິດໃໝ່ ມະຫານະທີສີທັນດອນ ເພື່ອເປັນການໂຄສະນາ ມັນອອກເນມ ເພື່ອດຶງດູດ ນັກລົງທຶນ ທີ່ວ່າຄົນໃນໂລກ ເຂົາຮູ້ວ່າເປັນ ຟໍຫາວເຊີນໄອແລັນ.”*

ທ່ານອະທິບາຍເພີ້ມວ່າ ຈະມີການກໍ່ສ້າງ ໂຄງຮ່າງພື້ນຖານ 1.3 ຕື້ ດອນລາ ສ່ວນອີກ 7.7 ຕື້ດອນລາ ນັກລົງທຶນຣາຍຍ່ອຍ ຈະເຂົ້າມາ ລົງທຶນແລະຈະສູມໃສ່ 3 ຂະແໜງໃຫຍ່ໆຄື: ຂະແໜງ ການພັທນາທີ່ດິນ ແລະອະສັງຫາຣິມະຊັບ, ຂະແໜງ ເຮືອນພັກ ແລະໂຮງແຮມ ແລະ ຂະແໜງ ການທ່ອງທ່ຽວ.

ສໍາລັບພື້ນທີ່ກໍ່ສ້າງ ຂອງໂຄງການມີທັງໝົດ 9,846 ເຮັກຕ່າ ແບ່ງການກໍ່ສ້າງອອກເປັນ 6 ຣະຍະ ຄືເຣີ້ມແຕ່ປີ 2018 - 2050 ພາຍໃຕ້ ອາຍຸ ສັມປະທານ 50 ປີ. ຕາມເປົ້າຫມາຍ ຂອງທາງການລາວ ແມ່ນຈະສ້າງ ເມືອງໂຂງ ແຂວງຈໍາປາສັກ ໃຫ້ເປັນຕົວຢ່າງ ການພັທນາ ເສຖກິດແລະສັງຄົມ, ເຮັດໃຫ້ປະຊາຊົນ ມີຄວາມກັງວົນວ່າ ໂຄງການດັ່ງກ່າວ ຈະສົ່ງຜົນກະທົບ ຕໍ່ປະຊາຊົນ ເມືອງໂຂງ ໃນ 6 ບ້ານ ປະມານ 40 ຄອບຄົວ ແຕ່ເຈົ້າໜ້າທີ່ ຜູ້ດຽວກັນກ່າວວ່າ ຣັຖບານລາວ ຈະພຍາຍາມ ບໍ່ໃຫ້ການກໍ່ສ້າງ ກະທົບເຮືອນຊານ ຂອງປະຊາຊົນ ທ່ານວ່າ:

*“9,846.01 ເຮັກຕ່າ ເປັນຫຍັງຈິ່ງວ່າຊັ້ນ ບ່ອນວ່າອອກຈາກ ຄອນພະເພັງ 7,075 ເຮັກຕ່າແລ້ວ ແມ່ນເຊື່ອມໂຍງໃສ່ ໝູ່ເກາະ 2,000 ກວ່າ ເຮັກຕ່າ ຣັຖບານບໍ່ໃຫ້ເຮັດໃສ່ ບ່ອນຖືກປະຊາຊົນ ໃຫ້ເຮັດໃສ່ ບ່ອນບໍ່ຖືກ ປະຊາຊົນ ໃຫ້ປະຊາຊົນມີສ່ວນຮ່ວມ ພັທນາແບບຍືນຍົງ ແລະຕິດພັນກັບ ການອານຸຮັກ ທັມມະຊາດ ແລະ ສະພາບແວດລ້ອມ ຮັກສາເຂດດັ່ງກ່າວ ເປັນເຂດສີຂຽວ ຖ້າໂຄງການ ພັທນາປັ້ນ ການເຂົ້າຄອນພະເພັງ ຄົນລາວ ຈະບໍ່ໄດ້ເກັບຄ່າເຂົ້າຊົມ.”*

ທ່ານອະທິບາຍວ່າ ໃນນັ້ນຈະມີໂຮງກາຊີໂນ ແຫ່ງດຽວພ້ອມກັບໂຮງແຮມ 5 ດາວ ຢູ່ບໍຣິເວັນ ຟາກທາງເລກ 13 ອອກໄປທາງ ປະເທດ ກັມພູຊາ ແລະສໍາລັບບໍຣິເວນ ໃກ້ຄຽງນໍ້າຕົກ ຄອນພະເພັງ ຈະສ້າງເປັນສວນ ສາທາຣະນະ.

ຢ່າງໃດກໍຕາມ ໂຄງການພັທນາເຂດເສຖກິດພິເສດ ດັ່ງກ່າວມີມູນຄ່າ ການລົງທຶນສູງກ່ວາ ໂຄງການກໍ່ສ້າງ ທາງຣົຖໄຟລາວ-ຈີນ ທີ່ໃຊ້ ງົບປະມານ ໃນການລົງທຶນ ພຽງ 5 ຕື້ກ່ວາ ດອນລ່າ ເທົ່ານັ້ນ.